## ການເກັບບັນທຶກ

ທ່ານຕ້ອງເອົາບັນທຶກການສັກຢາປ້ອງກັນໂຣກຂອງລູກທ່ານໃຫ້ແກ່ ບ່ອນຮັບຝາກເດັກ ໂຮງຮຽນອະນຸບານ ແລະ ການຈົດຊື່ເຂົ້າໂຮງຮຽນຂອງລູກທ່ານ. ພໍ່ແມ່ສາມາດຂໍເອົາສຳເນົາໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກ AIR ຂອງລູກທ່ານໄດ້ທຸກເວລາ (ກ່ອນທີ່ລູກພວກເຂົາຈະມີອາຍຸ 14ປີ):

- ໃຊ້ບັນຊີເມດີແຄຣ໌ອອນລາຍນ໌ຂອງພວກເຂົາໂດຍຜ່ານ myGov my.gov.au
- ໃຊ້ແອັບ Medicare Express Plus App humanservices.gov.au/individuals/subjects/express-plus-mobile-apps
- ໂທຫາ ສາຍສອບຖາມທົ່ວໄປ ຂອງ AIR ຕາມເບີ **1800 653 809**

ທ່ານຮູ້ບໍວ່າ ເດັກນ້ອຍຢູ່ໃນຣັດ NSW **ຈຳນວນກວ່າ 94%** ໄດ້ຮັບການ**ສັກຢາປ້ອງກັນໂຣກຢ່າງຄົບຖ້ວນ**?

## ຈະໄປສັກຢາປ້ອງກັນ ໂຣກໄດ້ຢູ່ໃສ

ການສັກຢາປ້ອງກັນໂຣກນີ້ໃຫ້ບໍຣິການໂດຍ:

- ນາຍໝໍທົ່ວໄປ
- ບາງຫ້ອງການເທສບານເມືອງ
- ບາງສູນອະນາມັຍຊຸມຊົນ

ຖ້າທ່ານບໍ່ແນ່ໃຈກ່ຽວກັບວ່າມີບໍຣິການໃດແດ່ທີ່ມີໃຫ້ຢູ່ໃນເຂດຂອງທ່ານ ທ່ານສາມາດຕິດຕໍ່ ພະແນກ ສາທາຣະນະສຸກທີ່ຢູ່ໃກ້ທ່ານທີ່ສຸດ ຕາມໝາຍເລກ **1300 066 055.**




ເດືອນ ກັນຍາ 2021 © NSW Health.
SHPN (HP NSW) 210822-15.

Lao

NSW Health

# ຈົ່ງສັກຢາໃຫ້ຖືກ ຕາມເວລາ

**ໃຫ້ການປ້ອງກັນທີ່ດີທີ່ສຸດແກ່ລູກທ່ານ**

NSW GOVERNMENT



## ຢ່າຊັກຊ້າໃນການສັກຢາປ້ອງກັນ

ຢາວັກຊີນມີຄວາມປອດໄພແລະໃຫ້ການປົກປ້ອງທີ່ດີທີ່ສຸດ ສຳລັບລູກຂອງທ່ານຖ້າພວກເຂົາໄດ້ສັກຢາຕາມເວລາຕາມ ຕາຕະລາງການສັກຢາປ້ອງກັນໂຣກຂອງ NSW.

ລະຍະເວລາຂອງການສັກຢາວັກຊີນທຸກຊະນິດໃຫ້ກັບ ເດັກນ້ອຍແມ່ນໄດ້ຖືກເລືອກໂດຍຜູ້ຊ່ຽວຊານຢ່າງລະມັດ ລະວັງເພື່ອໃຫ້ແນ່ໃຈວ່າເດັກນ້ອຍໄດ້ຮັບການປົກປ້ອງຕາມ ອາຍຸທີ່ໂຣກພົບໄດ້ເລື້ອຍໆ ຫຼື ຮ້າຍແຮງທີ່ສຸດ.

ຢ່າຊັກຊ້າໃນການສັກຢາປ້ອງກັນລູກຂອງທ່ານຖ້າພວກເຂົາມີ ອາການນ້ຳມູກໄຫຼ ຫຼືເປັນໄຂ້ເລັກນ້ອຍ. ໃຫ້ລົມກັບທ່ານໝໍ ຫຼືພະຍາບານຂອງທ່ານເພື່ອໃຫ້ແນ່ໃຈວ່າລູກຂອງທ່ານໄດ້ ຮັບການປົກປ້ອງໄວເທົ່າທີ່ຈະໄວໄດ້.

**ຮັກສາລູກຂອງທ່ານໃຫ້ປອດໄພ ສັກຢາໃຫ້ຖືກຕາມເວລາ**



## ເປັນຫຍັງຈຶ່ງສັກຢາປ້ອງກັນໂຣກ

- ການສັກຢາປ້ອງກັນໂຣກເປັນວິທີທີ່ດີທີ່ສຸດໃນການປົກປ້ອງ ລູກຂອງທ່ານຈາກໂຣກຮ້າຍແຮງຕ່າງໆ
- ການສັກຢາປ້ອງກັນໂຣກ ປ້ອງກັນລູກຂອງທ່ານພ້ອມທັງ ຊຸມຊົນຂອງທ່ານ.
- ການສັກຢາປ້ອງກັນໂຣກຊ່ວຍຄວບຄຸມໂຣກຮ້າຍແຮງທີ່ ສາມາດປ້ອງກັນໄດ້.

## ຈະສັກຢາໃນຍາມໃດ

ຕາຕະລາງເວລາ ການສັກຢາປ້ອງກັນໂຣກ ຂອງຣັດ NSW ແນະນຳວ່າ ບັນດາເດັກນ້ອຍຄວນສັກຢາ ປ້ອງກັນໂຣກຕາມອາຍຸດັ່ງຕໍ່ລົງໄປນີ້:

- ຕອນເກີດໃໝ່
- 6 ອາທິດ
- 4 ເດືອນ
- 6 ເດືອນ
- 12 ເດືອນ
- 18 ເດືອນ
- 4 ປີ

ມັນເປັນສິ່ງສຳຄັນໃນການສັກຢາປ້ອງກັນໂຣກໃຫ້ລູກ ທ່ານໃຫ້ຖືກຕາມເວລາ. ດັ່ງນັ້ນ ຈົ່ງຈອງໄວ້ລ່ວງໜ້າໃນການ ນັດໝາຍກັບນາຍໝໍຂອງທ່ານ ຫຼື ກັບ ພະຍາບານ ແລະ ຈົ່ງມື້ໄວ້ສັກຢາ.

## ຫຼັງຈາກການສັກຢາ

ວັກຊີນນີ້ປອດພັຍ ແລະ ມີປະສິດທິພາບໃນການ ປົກປ້ອງ ລູກຂອງທ່ານຈາກໂຣກທີ່ຮ້າຍແຮງ.

ບາງທີ ຫຼັງຈາກການສັກຢາລູກຂອງທ່ານອາດຈະມີອາການ ຂ້າງຄຽງພຽງເບົາບາງ ເຊັ່ນວ່າ ອາການເຈັບປວດ,ໃຄ່ແລະ ແດງຢູ່ບ່ອນສັກຢາ.

ຖ້າທ່ານເປັນກັງວົນກ່ຽວກັບບັນດາອາການຂ້າງຄຽງທີ່ ອາດຈະເປັນໄປໄດ້ ຈົ່ງເວົ້າລົມກັບນາຍໝໍຂອງທ່ານ ຫຼື ພະຍາບານ.

## ຢາສັກກັນໂຣກໄຂ້ຫວັດໃຫຍ່ຟຣີ ສຳລັບເດັກນ້ອຍ

ຢາວັກຊີນກັນໂຣກໄຂ້ຫວັດໃຫຍ່ (ໄຂ້ຫວັດ) ເປັນການ ປົກປ້ອງທີ່ດີທີ່ສຸດສຳລັບລູກຂອງ ທ່ານຈາກໂຣກ ໄຂ້ຫວັດທີ່ຮ້າຍແຮງ. ມັນແມ່ນຟຣີສຳລັບເດັກທີ່ມີອາຍຸ ຈາກ 6 ເດືອນ ຫາ ອາຍຸຕໍ່າກວ່າ 5 ປີ. ຢາວັກຊີນກັນໂຣກ ໄຂ້ຫວັດໃຫຍ່ຕ້ອງ ສັກໃຫ້ແຕ່ລະປີເພື່ອປົກປ້ອງຈາກ ໂຣກໄຂ້ຫວັດໃຫຍ່ສາຍພັນທີ່ມີເລື້ອຍໆ. ຢາສັກນີ້ມີໄວ້ ໃຫ້ທ່ານຕາມບ່ອນທີ່ໃຫ້ການສັກຢາກັນໂຣກທົ່ວໆໄປ.

ຖ້າທ່ານຕ້ອງການລາຍລະອຽດເພີ່ມຕື່ມ ຂໍໃຫ້ເຂົ້າໄປເບິ່ງ health.nsw.gov.au/flu